**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເລກທີ 0600/ຣສສ

ນະຄອນຫຼວງວຽງຈັນ, ວັນທີ 23/ກ2/21

# ຂໍ້ຕົກລົງ
## ວ່າດ້ວຍການອະນຸຍາດ
## ໃຫ້ຜູ້ອອກແຮງງານຕ່າງປະເທດ ເຂົ້າມາເຮັດວຽກຢູ່ ສປປ ລາວ

- ອີງຕາມ ກົດໝາຍວ່າດ້ວຍແຮງງານ ສະບັບເລກທີ 43/ສພຊ, ລົງວັນທີ 24 ທັນວາ 2013;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ສະບັບເລກທີ 200/ນຍ, ລົງວັນທີ 30 ມິຖຸນາ 2017;
- ອີງຕາມ ໜັງສືສະເໜີຂອງກົມພັດທະນາສີມືແຮງງານ ແລະ ຈັດຫາງານ ສະບັບເລກທີ 0137/ພຈງ, ລົງວັນທີ 17 ກຸມພາ 2021.

**ລັດຖະມົນຕີ ອອກຂໍ້ຕົກລົງ:**

## ໝວດທີ 1
## ບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ກຳນົດຫຼັກການ, ລະບຽບການ, ມາດຕະການ ແລະ ຂັ້ນຕອນໃນການອະນຸຍາດໃຫ້ຜູ້ອອກແຮງງານຕ່າງປະເທດເຂົ້າມາເຮັດວຽກຢູ່ ສປປ ລາວ ແນໃສ່ສ້າງຄວາມດຸ່ນດ່ຽງ ລະຫວ່າງຄວາມຕ້ອງການ ແລະ ການສະໜອງຄວາມຕ້ອງການແຮງງານທີ່ມີສີມືໃຫ້ແກ່ຫົວໜ່ວຍແຮງງານ ເພື່ອສົ່ງເສີມການເຄື່ອນໄຫວທຸລະກິດໃຫ້ມີຄວາມຄ່ອງຕົວ ທັງເປັນການ ສ້າງໂອກາດໃຫ້ຜູ້ອອກແຮງງານລາວ ໄດ້ຮຽນຮູ້ທັກສະ, ຄວາມຊຳນານງານ, ຄວາມສາມາດ ແລະ ທັດສະນະຄະຕິໃນການອອກແຮງງານ.

### ມາດຕາ 2 ການອະນຸຍາດໃຫ້ຜູ້ອອກແຮງງານຕ່າງປະເທດ ເຂົ້າມາເຮັດວຽກຢູ່ ສປປ ລາວ

ການອະນຸຍາດໃຫ້ແຮງງານຕ່າງປະເທດເຂົ້າມາເຮັດວຽກຢູ່ ສປປ ລາວ ແມ່ນຂະບວນການຄົ້ນຄວ້າ, ພິຈາລະນາ ແລະ ຕົກລົງ ກ່ຽວກັບຂັ້ນຕອນການນຳເຂົ້າແຮງງານຕ່າງປະເທດທີ່ມາເຮັດວຽກ ຢູ່ ສປປ ລາວ ບົນພື້ນຖານການສະເໜີຄວາມຕ້ອງການ ທີ່ຈຳເປັນນຳໃຊ້ແຮງງານຕ່າງປະເທດ ຂອງຫົວໜ່ວຍແຮງງານ ແລະ ການດັດສົມຂອງອົງການຄຸ້ມຄອງວຽກງານແຮງງານ ຕາມຂັ້ນຕອນທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

### ມາດຕາ 3 ອະທິບາຍຄຳສັບ

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຜູ້ອອກແຮງງານຕ່າງປະເທດ** ໝາຍເຖິງ ຄົນຕ່າງປະເທດ ທີ່ໄດ້ຮັບອະນຸຍາດ ເຂົ້າມາເຮັດວຽກ ຢູ່ ສປປ ລາວ ຢູ່ຫົວໜ່ວຍແຮງງານ ບົນພື້ນຖານການສະເໜີຂອງຜູ້ໃຊ້ແຮງງານ ໂດຍຜ່ານຂັ້ນຕອນ ຕາມທີ່ໄດ້ກຳນົດໄວ້ ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
2. **ຜູ້ນຳໃຊ້ແຮງງານຕ່າງປະເທດ** ໝາຍເຖິງ ນິຕິບຸກຄົນ ໂດຍໄດ້ຮັບອະນຸຍາດໃຫ້ລົງທຶນ ແລະ ເຄື່ອນໄຫວດຳເນີນທຸລະກິດ ຢ່າງຖືກຕ້ອງຕາມກົດໝາຍ ແລະ ລະບຽບການຂອງ ສປປ ລາວ;
3. **ຫົວໜ່ວຍແຮງງານ** ໝາຍເຖິງຫົວໜ່ວຍທຸລະກິດ, ການຜະລິດ ຫຼື ການບໍລິການ ແລະ ໂຄງການລົງທຶນຂອງທຸກພາກສ່ວນ ເສດຖະກິດ-ສັງຄົມ ທີ່ໄດ້ຂຶ້ນທະບຽນຕາມກົດໝາຍ ແລະ ລະບຽບການ;
4. **ໂກຕານຳໃຊ້ແຮງງານຕ່າງປະເທດ** ໝາຍເຖິງຈຳນວນຕົວເລກອະນຸຍາດນຳໃຊ້ແຮງງານ ຕ່າງປະເທດ ໃຫ້ຫົວໜ່ວຍແຮງງານໃນແຕ່ລະປີ;
5. **ໃບອະນຸຍາດນຳເຂົ້າ** ໝາຍເຖິງການອະນຸຍາດໃຫ້ຜູ້ອອກແຮງງານຕ່າງປະເທດເຂົ້າມາເຮັດວຽກ ຢູ່ ສປປ ລາວ ໃນແຕ່ລະຄັ້ງ ທີ່ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ, ນະຄອນຫຼວງວຽງຈັນ ແລະ ສູນບໍລິການຈັດຫາງານອອກໃຫ້;
6. **ອົງການຄຸ້ມຄອງວຽກງານແຮງງານ** ແມ່ນກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ ແລະ ນະຄອນຫຼວງວຽງຈັນ.

**ມາດຕາ 4 ນະໂຍບາຍ**

ລັດ ມີນະໂຍບາຍໃຫ້ຜູ້ອອກແຮງງານຕ່າງປະເທດ ທີ່ເຂົ້າມາເຮັດວຽກຢູ່ ສປປ ລາວ ໃນຕຳແໜ່ງງານທີ່ຜູ້ອອກແຮງງານລາວ ບໍ່ສາມາດເຮັດໄດ້ ຫຼື ບໍ່ພຽງພໍກັບຄວາມຕ້ອງການຂອງຕຳແໜ່ງງານຕົວຈິງຢູ່ໃນຫົວ ໜ່ວຍແຮງງານ.

ລັດ ປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ອອກແຮງງານຕ່າງປະເທດທີ່ເຂົ້າມາເຮັດວຽກຢູ່ ສປປ ລາວ ຕາມກົດໝາຍ ແລະ ລະບຽບການ.

ລັດ ມີນະໂຍບາຍຊຸກຍູ້ ແລະ ສົ່ງເສີມໃຫ້ຜູ້ອອກແຮງງານຕ່າງປະເທດປະຕິບັດພັນທະຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 5 ຫຼັກການ**

ການນຳໃຊ້ຜູ້ອອກແຮງງານຕ່າງປະເທດ ບົນຫຼັກການພື້ນຖານ ດັ່ງນີ້:

1. ຜູ້ອອກແຮງງານຕ່າງປະເທດທີ່ເຂົ້າມາເຮັດວຽກຢູ່ ສປປ ລາວ ຕ້ອງໄດ້ຮັບອະນຸຍາດຕາມກົດໝາຍ ແລະ ລະບຽບການ;
2. ຜູ້ອອກແຮງງານຕ່າງປະເທດທີ່ເຂົ້າມາເຮັດວຽກ ຢູ່ ສປປ ລາວ ໄດ້ຮັບການຕິດຕາມ ແລະ ຄຸ້ມຄອງຕາມກົດໝາຍ ແລະ ລະບຽບການ;
3. ຜູ້ອອກແຮງງານຕ່າງປະເທດໄດ້ຮັບສິດ ແລະ ປະຕິບັດພັນທະຕາມກົດໝາຍ ແລະ ລະບຽບການ;
4. ການນຳໃຊ້ຜູ້ອອກແຮງງານຕ່າງປະເທດ ໃຫ້ໄປຕາມອັດຕາສ່ວນຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;
5. ການນຳໃຊ້ຜູ້ອອກແຮງງານຕ່າງປະເທດ ຄຽງຄູ່ກັບການສົ່ງເສີມການຝຶກສີມືແຮງງານ ໃຫ້ຜູ້ອອກແຮງງານລາວ ໃຫ້ມີຄວາມຮູ້, ຄວາມສາມາດ ແລະ ຄວາມຊຳນານງານ ເພື່ອສາມາດປ່ຽນແທນ;
6. ຜູ້ອອກແຮງງານຕ່າງປະເທດທີ່ສິ້ນສຸດສັນຍາ ຫຼື ຄົບກຳນົດການນຳໃຊ້ແຮງງານ ຕ້ອງກັບຄືນປະເທດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 6 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບຫົວໜ່ວຍແຮງງານ ທີ່ມີຄວາມຕ້ອງການນຳໃຊ້ແຮງງານຕ່າງປະເທດ ແລະ ຜູ້ອອກແຮງງານຕ່າງປະເທດ ທີ່ເຂົ້າມາ ເຮັດວຽກຢູ່ ສປປ ລາວ ຕາມການອະນຸຍາດຂອງອົງການຄຸ້ມຄອງວຽກງານແຮງງານ ແລະ ພາກສ່ວນທີ່ກ່ຽວຂ້ອງ.

ຂໍ້ຕົກລົງສະບັບນີ້ ບໍ່ມີຜົນບັງຄັບປະຕິບັດຕໍ່ນັກການທູດ, ຄະນະຜູ້ແທນທາງການ ພ້ອມດ້ວຍຄອບຄົວ, ຜູ້ທີ່ມາປະຕິບັດໜ້າທີ່ຕາມການຕົກລົງຂອງລັດຖະບານ, ຜູ້ທີ່ມາຮ່ວມປະຊຸມ, ຝຶກອົບຮົມ, ນັກລົງທຶນຕ່າງປະເທດທີ່ໄດ້ລະບຸໄວ້ໃນໃບອະນຸຍາດດຳເນີນທຸລະກິດ, ພະນັກງານຂອງອົງການສະຫະປະຊາຊາດ ແລະ ອົງການຈັດຕັ້ງສາກົນ.

## ໝວດທີ 2
## ຜູ້ອອກແຮງງານຕ່າງປະເທດທີ່ເຂົ້າມາເຮັດວຽກຢູ່ ສປປ ລາວ

### ມາດຕາ 7 ເງື່ອນໄຂຜູ້ອອກແຮງງານຕ່າງປະເທດທີ່ເຂົ້າມາເຮັດວຽກຢູ່ ສປປ ລາວ

ຜູ້ອອກແຮງງານຕ່າງປະເທດ ທີ່ເຂົ້າມາເຮັດວຽກຢູ່ ສປປ ລາວ ຕ້ອງມີເງື່ອນໄຂ ຄົບຖ້ວນ ດັ່ງນີ້:

- ມີອາຍຸ ແຕ່ຊາວປີ ຂຶ້ນໄປ;
- ມີສີມື ແລະ ລະດັບວິຊາສະເພາະທີ່ສອດຄ່ອງກັບຕຳແໜ່ງງານທີ່ຕ້ອງການ;
- ມີຊີວະປະຫວັດຈະແຈ້ງດີ ແລະ ບໍ່ຫຼົບຫຼີກຄະດີເພື່ອເຂົ້າມາເຮັດວຽກຢູ່ ສປປ ລາວ;
- ມີສຸຂະພາບແຂງແຮງ ໂດຍມີໃບຢັ້ງຢືນສຸຂະພາບຮັບຮອງຈາກປະເທດຕົ້ນທາງ ຫຼື ປະເທດປາຍທາງ;
- ເງື່ອນໄຂອື່ນ ທີ່ເຫັນວ່າມີຄວາມຈຳເປັນ.

### ມາດຕາ 8 ສິດຂອງຜູ້ອອກແຮງງານຕ່າງປະເທດ

ຜູ້ອອກແຮງງານຕ່າງປະເທດທີ່ເຂົ້າມາເຮັດວຽກຢູ່ ສປປ ລາວ ມີສິດ ດັ່ງນີ້:

1. ໄດ້ຮັບຄ່າແຮງງານ, ຄ່າຕອບແທນ ແລະ ນະໂຍບາຍອື່ນ ຕາມສັນຍາ ແລະ ກົດໝາຍ;
2. ເຂົ້າເປັນສະມາຊິກປະກັນສັງຄົມ ແລະ ໄດ້ຮັບອຸດໜູນຕາມ ກົດໝາຍວ່າດ້ວຍປະກັນສັງຄົມ;
3. ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດຕາມກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ;
4. ໄດ້ຮັບການປະຕິບັດຢ່າງເທົ່າທຽມກັບຜູ້ອອກແຮງງານລາວ ທີ່ເຮັດວຽກຄືກັນຕາມມາດຖານແຮງງານ ແລະ ສະພາບເງື່ອນໄຂການເຮັດວຽກ ລວມທັງເງິນເດືອນ ຫຼື ຄ່າແຮງງານ;
5. ໂອນເງິນ ຫຼື ເຄື່ອນຍ້າຍຊັບສິນຂອງຕົນທີ່ຖືກຕ້ອງຕາມກົດໝາຍກັບຄືນປະເທດ;
6. ເຂົ້າເຖິງແຫຼ່ງຂໍ້ມູນຂ່າວສານທີ່ກ່ຽວຂ້ອງ;
7. ເດີນທາງໄປ-ມາ ພາຍໃນ ສປປ ລາວ ຕາມການອະນຸຍາດ;
8. ປ່ຽນສະຖານທີ່ເຮັດວຽກຕາມເງື່ອນໄຂ ແລະ ລະບຽບການທີ່ກ່ຽວຂ້ອງ;
9. ຮ້ອງຂໍ ຫຼື ສະເໜີສິດ ແລະ ຜົນປະໂຫຍດຂອງຕົນ ຕໍ່ອົງການທີ່ກ່ຽວຂ້ອງ;
10. ນຳໃຊ້ສິດອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

### ມາດຕາ 9. ພັນທະຂອງຜູ້ອອກແຮງງານຕ່າງປະເທດ

ຜູ້ອອກແຮງງານຕ່າງປະເທດທີ່ເຂົ້າມາເຮັດວຽກຢູ່ ສປປ ລາວ ມີພັນທະ ດັ່ງນີ້:

1. ປະຕິບັດກົດໝາຍ ແລະ ຮີດຄອງປະເພນີ ຂອງ ສປປ ລາວ;
2. ເຂົ້າເປັນສະມາຊິກປະກັນສັງຄົມ ຕາມກົດໝາຍຂອງ ສປປ ລາວ;
3. ເຮັດວຽກຕາມສະຖານທີ່ ທີ່ກຳນົດໄວ້ ແລະ ປະຕິບັດກົດລະບຽບ ໃນສະຖານທີ່ເຮັດວຽກຢ່າງເຂັ້ມງວດ;
4. ຖ່າຍທອດຄວາມຮູ້ ແລະ ສີມື ໃຫ້ແກ່ຜູ້ອອກແຮງງານລາວ;
5. ປະຕິບັດຕາມສັນຍາແຮງງານຢ່າງເຂັ້ມງວດ;
6. ແຈ້ງອົງການຄຸ້ມຄອງວຽກງານແຮງງານ ຊາບກ່ອນ 10 ວັນລັດຖະການໃນກໍລະນີ ປ່ຽນສະຖານທີ່ເຮັດວຽກ;
7. ຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເກີດຂຶ້ນ ຈາກການລະເມີດສັນຍາ ແລະ ກົດໝາຍຂອງ ສປປ ລາວ;
8. ເສຍພັນທະອາກອນ ຕາມກົດໝາຍ ແລະ ລະບຽບການ;
9. ແຈ້ງຈຳນວນເງິນເດືອນ ຫຼື ຄ່າແຮງງານໃຫ້ໜ່ວຍງານຂອງລັດທີ່ກ່ຽວຂ້ອງຊາບ;
10. ກັບຄືນປະເທດ ພາຍຫຼັງສິ້ນສຸດສັນຍາ ຫຼື ຄົບກຳນົດເວລາ 5 ປີ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
11. ສົ່ງບັດອະນຸຍາດເຮັດວຽກຄືນໃຫ້ຜູ້ນຳໃຊ້ແຮງງານ ເພື່ອສົ່ງໃຫ້ອົງການຄຸ້ມຄອງວຽກງານແຮງງານ;
12. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 10 ອາຍຸການເຮັດວຽກຂອງຜູ້ອອກແຮງງານຕ່າງປະເທດ**

- ຜູ້ອອກແຮງງານຕ່າງປະເທດທີ່ເຂົ້າມາເຮັດວຽກຢູ່ ສປປ ລາວ ອະນຸຍາດໃຫ້ຕາມສັນຍາ ໃນໄລຍະ 1 ເດືອນ, 3 ເດືອນ, 6 ເດືອນ ແລະ 12 ເດືອນ ແລະ ສາມາດຂໍຕໍ່ກຳນົດເວລາເຮັດວຽກໄດ້ຄັ້ງລະບໍ່ເກີນ 12 ເດືອນ ລວມທັງໝົດບໍ່ເກີນ 5 ປີ;
- ຜູ້ອອກແຮງງານຕ່າງປະເທດຕ້ອງກັບຄືນປະເທດຂອງຕົນໃນເມື່ອຄົບກຳນົດ 5 ປີ ແລະ ສາມາດຂໍອະນຸຍາດກັບຄືນເຂົ້າມາເຮັດວຽກຢູ່ ສປປ ລາວ ໄດ້ອີກເທື່ອໃໝ່ ພາຍຫຼັງຄົບກຳນົດເວລາ 30 ວັນ;
- ຖ້າຫາກຜູ້ໃຊ້ແຮງງານມີຄວາມຈຳເປັນສືບຕໍ່ນຳໃຊ້ຜູ້ອອກແຮງງານຕ່າງປະເທດໃນການດຳເນີນທຸລະກິດ, ການຂະຫຍາຍການຜະລິດ, ການນຳໃຊ້ເຕັກນິກ-ເຕັກໂນໂລຊີໃໝ່ ກໍ່ອາດຈະຮັບພິຈາລະນາໃຫ້ຕໍ່ກຳນົດເວລາເຮັດວຽກຕາມຄວາມຈຳເປັນ ຂອງວຽກງານໂດຍສອດຄ່ອງກັບສັນຍາແຮງງານ;
- ກໍລະນີຜູ້ອອກແຮງງານປ່ຽນຫົວໜ່ວຍແຮງງານ ກ່ອນສິ້ນສຸດສັນຍາແຮງງານ ກໍ່ຕ້ອງດຳເນີນເອກະສານເພື່ອຂໍອະນຸຍາດເຮັດວຽກໃໝ່ຕາມຂັ້ນຕອນທີ່ກຳນົດໄວ້ໃນລະບຽບການ.

## ໝວດທີ 3
## ຜູ້ນຳໃຊ້ແຮງງານຕ່າງປະເທດ

**ມາດຕາ 11 ເງື່ອນໄຂຂອງຜູ້ນຳໃຊ້ແຮງງານຕ່າງປະເທດ**

ຫົວໜ່ວຍແຮງງານໃນຂອບເຂດທົ່ວປະເທດ ທີ່ຕ້ອງການນຳໃຊ້ແຮງງານຕ່າງປະເທດ ຕ້ອງມີເງື່ອນໄຂດັ່ງນີ້:

1. ໄດ້ຮັບອະນຸຍາດລົງທຶນ ແລະ ເຄື່ອນໄຫວດຳເນີນທຸລະກິດຢ່າງຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
2. ເສຍພັນທະອາກອນຢ່າງຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

3. ມີແຜນການນຳໃຊ້ແຮງງານລາວ, ແຮງງານຕ່າງປະເທດ ແລະ ແຜນປ່ຽນແທນການນຳໃຊ້ແຮງງານຕ່າງປະເທດໃນແຕ່ລະປີ ຢ່າງລະອຽດ;
4. ຕຳແໜ່ງງານທີ່ຂໍນຳໃຊ້ແຮງງານຕ່າງປະເທດ ຕ້ອງໃຫ້ສອດຄ່ອງ ແລະ ເໝາະສົມກັບໜ້າວຽກຕົວຈິງ;
5. ສະໜອງຂໍ້ມູນຄວາມຕ້ອງການນຳໃຊ້ແຮງງານລາວ ໃນແຕ່ລະໄລຍະໃຫ້ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ, ນະຄອນຫຼວງວຽງຈັນ ແລະ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໂດຍຜ່ານລະບົບເວບໄຊບໍລິການຈັດຫາງານສາທາລະນະຊົນ www.pes.molsw.gov.la

## ມາດຕາ 12 ສິດຂອງຜູ້ນຳໃຊ້ແຮງງານຕ່າງປະເທດ

ຜູ້ນຳໃຊ້ແຮງງານຕ່າງປະເທດ ມີສິດ ດັ່ງນີ້:

1. ປະສານກັບຜູ້ອອກແຮງງານຕ່າງປະເທດ;
2. ປະກອບເອກະສານຂໍໂກຕານຳໃຊ້ແຮງງານຕ່າງປະເທດ, ຂໍອະນຸຍາດນຳເຂົ້າແຮງງານຕ່າງປະເທດ, ຂໍອອກບັດ ແລະ ຂໍຕໍ່ບັດອະນຸຍາດເຮັດວຽກໃຫ້ຜູ້ອອກແຮງງານຕ່າງປະເທດ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;
3. ສະເໜີຂໍນຳໃຊ້ແຮງງານຕ່າງປະເທດຕາມອັດຕາສ່ວນທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;
4. ເຊັນສັນຍາແຮງງານກັບຜູ້ອອກແຮງງານຕ່າງປະເທດ;
5. ຍົກເລີກສັນຍາແຮງງານກ່ອນກຳນົດ ໃນກໍລະນີຜູ້ອອກແຮງງານບໍ່ປະຕິບັດຕາມສັນຍາ;
6. ຍື່ນຄຳຮ້ອງ ຫຼື ຄຳສະເໜີຕໍ່ອົງການທີ່ກ່ຽວຂ້ອງ;
7. ເຜີຍແຜ່, ແນະນຳ ການປະຕິບັດລະບຽບ, ກົດໝາຍ ແລະ ຮີດຄອງປະເພນີຂອງ ສປປ ລາວ ໃຫ້ຜູ້ອອກແຮງງານ ໃນຄວາມຮັບຜິດຊອບຂອງຕົນ;
8. ຈັດຕັ້ງໃຫ້ຜູ້ອອກແຮງງານຕ່າງປະເທດຖ່າຍທອດຄວາມຮູ້ວິຊາການ ໃຫ້ແກ່ແຮງງານລາວ;
9. ນຳໃຊ້ສິດອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ມາດຕາ 13 ພັນທະຂອງຜູ້ນຳໃຊ້ແຮງງານຕ່າງປະເທດ

ຜູ້ນຳໃຊ້ແຮງງານຕ່າງປະເທດ ມີພັນທະ ດັ່ງນີ້:

1. ນຳໃຊ້ແຮງງານຕ່າງປະເທດ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
2. ລາຍງານຂໍ້ມູນຂອງຜູ້ອອກແຮງງານຕ່າງປະເທດທີ່ຈະກັບຄືນປະເທດ ໃຫ້ອົງການຄຸ້ມຄອງວຽກງານແຮງງານ ຊາບໃນແຕ່ລະໄລຍະ;
3. ນຳໃຊ້ຜູ້ອອກແຮງງານຕ່າງປະເທດ ໃຫ້ຖືກສະຖານທີ່ຕາມການອະນຸຍາດ, ໃນກໍລະນີມີການປ່ຽນສະຖານເຮັດວຽກ ຫຼື ມອບໂອນຜູ້ອອກແຮງງານຕ່າງປະເທດໃຫ້ຜູ້ໃຊ້ແຮງງານຄົນອື່ນຕ້ອງໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງວຽກງານແຮງງານ;
4. ຈັດສົ່ງຜູ້ອອກແຮງງານຕ່າງປະເທດກັບຄືນປະເທດເດີມ ພາຍຫຼັງໝົດກຳນົດເວລາອະນຸຍາດເຮັດວຽກຢູ່ ສປປ ລາວ ພ້ອມທັງເກັບກຳບັດອະນຸຍາດເຮັດວຽກ ສົ່ງຄືນໃຫ້ອົງການຄຸ້ມຄອງວຽກງານແຮງງານ;
5. ຕ້ອງນຳພາຜູ້ອອກແຮງງານຕ່າງປະເທດເຂົ້າເປັນສະມາຊິກປະກັນສັງຄົມ ຕາມກົດໝາຍ ຂອງ ສປປ ລາວ;
6. ຮັບເອົາຜູ້ອອກແຮງງານລາວເຂົ້າເຮັດວຽກຕາມອັດຕາສ່ວນທີ່ກຳນົດໄວ້ໃນກົດໝາຍ ແລະ ປະກາດຮັບສະໝັກງານຢ່າງຈະແຈ້ງ;

7. ພັດທະນາສີມືແຮງງານໃຫ້ກັບຜູ້ອອກແຮງງານທີ່ເປັນຄົນລາວ ເພື່ອປ່ຽນແທນຜູ້ອອກແຮງງານຕ່າງປະເທດໃນແຕ່ລະໄລຍະ;
8. ແຈ້ງບັນຊີລາຍຊື່ເງິນເດືອນຂອງຜູ້ອອກແຮງງານພາຍໃນຫົວໜ່ວຍແຮງງານ ໃຫ້ອົງການຄຸ້ມຄອງວຽກງານແຮງງານ;
9. ເຜີຍແຜ່ແນວທາງນະໂຍບາຍ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຂອງ ສປປ ລາວ ໃຫ້ຜູ້ອອກແຮງງານຊາບ;
10. ປະຕິບັດພັນທະອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ.

## ມາດຕາ 14 ການປ່ຽນໂອນຜູ້ອອກແຮງງານ

ການປ່ຽນໂອນຜູ້ອອກແຮງງານ ແມ່ນການປ່ຽນໂອນຈາກຫົວໜ່ວຍແຮງງານໃດໜຶ່ງ ໄປໃຫ້ຫົວໜ່ວຍແຮງງານອື່ນ ພາຍຫຼັງທີ່ສິ້ນສຸດໂຄງການຜະລິດ ຫຼື ການກໍ່ສ້າງ ຫຼື ການໂອນວິສາຫະກິດ ໃຫ້ຜູ້ອື່ນ ແຕ່ຜູ້ອອກແຮງງານຍັງມີເງື່ອນໄຂເຮັດວຽກຕາມທີ່ກຳນົດໄວ້ໃນມາດຕາ 10 ຂອງຂໍ້ຕົກລົງສະບັບນີ້ ແລະ ຕ້ອງການສືບຕໍ່ເຮັດວຽກຢູ່ໃນ ສປປ ລາວ ໂດຍຜູ້ອອກແຮງງານບໍ່ຕ້ອງເດີນທາງອອກນອກປະເທດ; ຊຶ່ງການປ່ຽນໂອນຜູ້ອອກແຮງງານແມ່ນພິຈາລະນາອະນຸມັດຂອງອົງການຄຸ້ມຄອງວຽກງານແຮງງານ.

## ມາດຕາ 15. ຂັ້ນຕອນການປ່ຽນໂອນຜູ້ອອກແຮງງານ

ຂັ້ນຕອນການປ່ຽນໂອນຜູ້ອອກແຮງງານ ໃຫ້ປະຕິບັດດັ່ງນີ້:

1. ຫົວໜ່ວຍແຮງງານທີ່ຈະຮັບເອົາຜູ້ອອກແຮງງານ ຕ້ອງສະເໜີຕໍ່ອົງການຄຸ້ມຄອງວຽກງານແຮງງານ;
2. ຫົວໜ່ວຍແຮງງານຂໍໂກຕານຳໃຊ້ແຮງງານຕ່າງປະເທດ;
3. ຂໍອະນຸຍາດນຳເຂົ້າແຮງງານຕ່າງປະເທດເຂົ້າມາເຮັດວຽກ, ຈ່າຍຄ່າທຳນຽມ ແລະ ຄ່າບໍລິການ ທີ່ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ, ນະຄອນຫຼວງວຽງຈັນ ຫຼື ສູນບໍລິການຈັດຫາງານ ຕາມທີ່ລະບຸໄວ້ໃນໃບອະນຸຍາດໂກຕານຳໃຊ້ແຮງງານຕ່າງປະເທດ;
4. ຂໍວິຊາແຮງງານ (LA B2) ຢູ່ກົມກົງສຸນ, ກະຊວງການຕ່າງປະເທດ;
5. ຂໍອອກບັດອະນຸຍາດເຮັດວຽກນຳພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ, ນະຄອນຫຼວງວຽງຈັນ ຫຼື ສູນບໍລິການຈັດຫາງານ;
6. ຂໍອອກບັດອະນຸຍາດພັກ-ເຊົາ ນຳກົມຕຳຫຼວດຄຸ້ມຄອງຄົນຕ່າງປະເທດ, ກະຊວງປ້ອງກັນຄວາມສະຫງົບ ຫຼື ກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ;
7. ຂໍວິຊາເຂົ້າ-ອອກຫຼາຍເທື່ອ ນຳກົມກົງສຸນ, ກະຊວງການຕ່າງປະເທດ ໃນກໍລະນີຈຳເປັນເດີນທາງການເຂົ້າ-ອອກ ຫຼາຍເທື່ອ.

## ມາດຕາ 16 ເອກະສານປະກອບຂໍປ່ຽນໂອນຜູ້ອອກແຮງງານ

ເອກະສານປະກອບຂໍປ່ຽນໂອນຜູ້ອອກແຮງງານ ມີດັ່ງນີ້:

1. ໜັງສືສະເໜີຂອງຫົວໜ່ວຍແຮງງານ;
2. ບັນຊີລາຍຊື່ຂອງຜູ້ອອກແຮງງານ ພ້ອມສຳເນົາໜັງສືຜ່ານແດນ;
3. ໜັງສືຮັບຮອງເອົາຜູ້ອອກແຮງງານ ຂອງຫົວໜ່ວຍແຮງງານໃໝ່;
4. ສຳເນົາໃບອະນຸຍາດໂກຕານຳໃຊ້ແຮງງານຕ່າງປະເທດຂອງຫົວໜ່ວຍແຮງງານແຫ່ງໃໝ່.

# ໝວດທີ 4
# ການອະນຸມັດໂກຕານຳໃຊ້ແຮງງານຕ່າງປະເທດ

**ມາດຕາ 17 ອັດຕາສ່ວນນຳໃຊ້ແຮງງານຕ່າງປະເທດ**

ອັດຕາສ່ວນການຮັບເອົາຜູ້ອອກແຮງງານຕ່າງປະເທດເຂົ້າມາເຮັດວຽກຢູ່ຫົວໜ່ວຍແຮງງານ ໃຫ້ປະຕິບັດ ດັ່ງນີ້:

1. **ສິບຫ້າສ່ວນຮ້ອຍ** ຂອງຜູ້ອອກແຮງງານລາວທັງໝົດຢູ່ໃນຫົວໜ່ວຍແຮງງານນັ້ນ ສໍາລັບຜູ້ອອກແຮງງານຕ່າງປະເທດທີ່ມີວິຊາສະເພາະ ທີ່ອອກແຮງງານທາງດ້ານຮ່າງກາຍ;
2. **ຊາວຫ້າສ່ວນຮ້ອຍ**ຂອງຜູ້ອອກແຮງງານລາວທັງໝົດ ໃນຫົວໜ່ວຍແຮງງານນັ້ນ ສໍາລັບຜູ້ອອກແຮງງານຕ່າງປະເທດ ມີວິຊາສະເພາະ ອອກແຮງງານດ້ວຍມັນສະໝອງ.

ສໍາລັບໂຄງການລົງທຶນຂະໜາດໃຫຍ່ ແລະ ໂຄງການບູລິມະສິດຂອງລັດຖະບານ ແມ່ນໃຫ້ປະຕິບັດຕາມສັນຍາ ລະຫວ່າງ ເຈົ້າຂອງໂຄງການ ແລະ ລັດຖະບານ ຫຼື ຕາມຄໍາສັ່ງສະເພາະຂອງລັດຖະບານ.

ຜູ້ອອກແຮງງານຕ່າງປະເທດ ຕາມອາຊີບທີ່ສາມາດເຄື່ອນຍ້າຍໃນຂອບການຮ່ວມມື ກັບບັນດາປະເທດ ເປັນຕົ້ນປະເທດໃນອາຊີຕາເວັນອອກສ່ຽງໃຕ້ ຖ້າມີ ກໍໃຫ້ປະຕິບັດຕາມລະບຽບການສະເພາະ.

**ມາດຕາ 18 ການອະນຸມັດຈໍານວນໂກຕານໍາໃຊ້ແຮງງານຕ່າງປະເທດປະຈໍາປີ**

ການອະນຸມັດຈໍານວນໂກຕານໍາໃຊ້ແຮງງານຕ່າງປະເທດໃນແຕ່ລະປີ ແມ່ນການພິຈາລະນາ ແລະ ອະນຸມັດຂອງລັດຖະມົນຕີກະຊວງແຮງງານ ແລະ ສະຫວັດດີການສັງຄົມ ບົນພື້ນຖານການຄົ້ນຄວ້າ ແລະ ດັດສົມ ລະຫວ່າງຄວາມຕ້ອງການນໍາໃຊ້ແຮງງານຕ່າງປະເທດ ແລະ ຄວາມສາມາດໃນການສະໜອງແຮງງານລາວ ຂອງກົມພັດທະນາສີມືແຮງງານ ແລະ ຈັດຫາງານ ໂດຍອີງໃສ່ແຜນຄວາມຕ້ອງການນໍາໃຊ້ແຮງງານຕ່າງປະເທດຂອງຫົວໜ່ວຍແຮງງານ ເພື່ອໃຫ້ສາມາດຂັບເຄື່ອນວຽກງານການຜະລິດ, ທຸລະກິດ ແລະ ບໍລິການ ໃນແຕ່ລະໄລຍະ.

ກົມພັດທະນາສີມືແຮງງານ ແລະ ຈັດຫາງານ ເປັນຜູ້ແບ່ງປັນ ແລະ ກໍານົດ ຈໍານວນໂກຕານໍາໃຊ້ແຮງງານຕ່າງປະເທດໃຫ້ຫົວໜ່ວຍແຮງງານ ບົນພື້ນຖານຈໍານວນໂກຕາທີ່ລັດຖະມົນຕີກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໄດ້ອະນຸມັດໃນແຕ່ລະປີ.

**ມາດຕາ 19 ການຂໍໂກຕາ**

ຫົວໜ່ວຍແຮງງານ ທີ່ມີຄວາມຕ້ອງການນໍາໃຊ້ແຮງງານຕ່າງປະເທດ ສາມາດຍື່ນເອກະສານສະເໜີຂໍໂກຕານໍາໃຊ້ແຮງງານຕ່າງປະເທດ ນໍາກົມພັດທະນາສີມືແຮງງານ ແລະ ຈັດຫາງານ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ. ໃນກໍລະນີ ຫົວໜ່ວຍແຮງງານສະເໜີຂໍໂກຕານໍາໃຊ້ແຮງງານຕ່າງເທດ ຜ່ານພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ, ນະຄອນຫຼວງວຽງຈັນ ຕ້ອງສັງລວມ ແລະ ຢັ້ງຢືນ ສົ່ງໃຫ້ກົມພັດທະນາສີມືແຮງງານ ແລະ ຈັດຫາງານ.

**ມາດຕາ 20 ເອກະສານປະກອບຂໍໂກຕາ**

ເອກະສານປະກອບຂໍໂກຕານໍາໃຊ້ແຮງງານຕ່າງປະເທດ ປະກອບດ້ວຍ:

1. ໃບຄໍາຮ້ອງຂໍໂກຕານໍາໃຊ້ແຮງງານຕ່າງປະເທດ;
2. ແຜນນໍາໃຊ້ແຮງງານລາວ ແລະ ຕ່າງປະເທດ;
3. ໃບແຈ້ງຕໍາແໜ່ງງານວ່າງສໍາລັບແຮງງານລາວ (ຕ້ອງປ້ອນຂໍ້ມູນຕໍາແໜ່ງງານວ່າງໃສ່ເວັບໄຊ www.pes.molsw.gov.la);

4. ສຳເນົາສີໃບທະບຽນວິສາຫະກິດ ແລະ ໃບອະນຸຍາດລົງທຶນທັງດ້ານໜ້າ ແລະ ດ້ານຫຼັງ ຫຼື ເອກະສານອະນຸຍາດເຄື່ອນໄຫວກິດຈະການ;
5. ສຳເນົາສີໃບທະບຽນອາກອນ ລວມທັງອາກອນເງິນເດືອນທີ່ມີລາຍຊື່ຈຳນວນພະນັກງານລາວເດືອນຫຼັງສຸດ;
6. ສຳເນົາສັນຍາໂຄງການ ຫຼື ສັນຍາສຳປະທານ (ຖ້າມີ);
7. ໃບມອບສິດຈາກຫົວໜ່ວຍແຮງງານໃຫ້ຜູ້ມາພົວພັນເອກະສານ (ສະບັບແທ້).

**ມາດຕາ 21 ອາຍຸໃບອະນຸຍາດໂກຕາ**

ໃບອະນຸຍາດໂກຕານຳໃຊ້ແຮງງານຕ່າງປະເທດ ມີອາຍຸບໍ່ເກີນ 1 ປີ ນັບແຕ່ມື້ໄດ້ຮັບອະນຸຍາດ ແລະ ຈະສິ້ນສຸດໃນວັນທີ 31 ທັນວາ ຂອງແຕ່ລະປີ. ໂກຕານຳໃຊ້ແຮງງານຕ່າງປະເທດ ທີ່ບໍ່ສາມາດຂໍອະນຸຍາດໃຫ້ຜູ້ອອກແຮງງານເຂົ້າມາຄົບຕາມຈຳນວນທີ່ໄດ້ຮັບອະນຸມັດ ຈະບໍ່ສາມາດນຳໃຊ້ໃນປີຕໍ່ໄປ.

## ໝວດທີ 5
## ການຂໍອະນຸຍາດນຳເຂົ້າແຮງງານຕ່າງປະເທດເຂົ້າມາເຮັດວຽກ

**ມາດຕາ 22 ການອະນຸຍາດນຳເຂົ້າ**

ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ, ນະຄອນຫຼວງວຽງຈັນ ແລະ ສູນບໍລິການຈັດຫາງານ ອະນຸມັດການນຳເຂົ້າແຮງງານຕ່າງປະເທດເຂົ້າມາເຮັດວຽກ ຢູ່ ສປປ ລາວ ຕາມຈຳນວນໂກຕາ ແລະ ສະຖານທີ່ ທີ່ໄດ້ຮັບອະນຸຍາດ. ການອະນຸຍາດໃຫ້ຜູ້ອອກແຮງງານຕ່າງປະເທດເຂົ້າມາເຮັດວຽກ ຕ້ອງດຳເນີນຜ່ານລະບົບຖານຂໍ້ມູນ ທີ່ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໄດ້ອະນຸມັດໃຫ້ນຳໃຊ້ ໃນແຕ່ລະໄລຍະ.

ຫົວໜ່ວຍແຮງງານ ສາມາດຂໍອະນຸຍາດນຳເຂົ້າຜູ້ອອກແຮງງານຕ່າງປະເທດ ມາເຮັດວຽກ ຢູ່ໃນຫົວ ໜ່ວຍແຮງງານຂອງຕົນ ຢູ່ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ, ນະຄອນຫຼວງວຽງຈັນ ຫຼື ສູນບໍລິການຈັດຫາງານ ຕາມທີ່ໄດ້ລະບຸໄວ້ໃນໃບອະນຸຍາດໂກຕາ ແລະ ສາມາດຂໍອະນຸຍາດນຳເຂົ້າໄດ້ຫຼາຍກວ່າ 1 ຄັ້ງ ພາຍໃນ 1 ປີ ແຕ່ບໍ່ໃຫ້ເກີນຈຳນວນໂກຕານຳໃຊ້ແຮງງານຕ່າງປະເທດທີ່ໄດ້ຮັບອະນຸມັດ.

**ມາດຕາ 23 ຂັ້ນຕອນໃນການຂໍອະນຸຍາດນຳເຂົ້າ**

ຫົວໜ່ວຍແຮງງານ ທີ່ໄດ້ຮັບໂກຕານຳໃຊ້ແຮງງານຕ່າງປະເທດ ຕ້ອງດຳເນີນການຂໍອະນຸຍາດນຳເຂົ້າແຮງງານຕ່າງປະເທດເຂົ້າມາເຮັດວຽກ ດັ່ງນີ້:

- ຂໍອະນຸຍາດນຳເຂົ້າແຮງງານຕ່າງປະເທດເຂົ້າມາເຮັດວຽກ ຕາມທີ່ລະບຸໄວ້ໃນໃບອະນຸຍາດໂກຕານຳໃຊ້ແຮງງານຕ່າງປະເທດ, ຈ່າຍຄ່າທຳນຽມ ແລະ ຄ່າບໍລິການ ທີ່ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ, ນະຄອນຫຼວງວຽງຈັນ ຫຼື ສູນບໍລິການຈັດຫາງານ.
- ຜ່ານລາຍຊື່ຜູ້ອອກແຮງງານຕ່າງປະເທດ ນຳກົມຕຳຫຼວດກວດຄົນເຂົ້າ-ອອກເມືອງ, ກະຊວງ ປ້ອງກັນຄວາມສະຫງົບ ເພື່ອກວດກາຕາມລະບຽບການ;
- ແຈ້ງບັນຊີລາຍຊື່ຜູ້ອອກແຮງງານຕ່າງປະເທດ ຕໍ່ກົມກົງສຸນ, ກະຊວງການຕ່າງປະເທດ ເພື່ອຂໍວີຊາແຮງງານ (LA B2) ຢູ່ສະຖານເອກອັກຄະລັດຖະທູດ ຫຼື ສະຖານກົງສຸນໃຫຍ່ ແຫ່ງ ສປປ ລາວ ທີ່ປະເທດຕົ້ນທາງ. ຍົກເວັ້ນໃນກໍລະນີຈຳເປັນໃຫ້ເອົາວີຊາຢູ່ກັບດ່ານສາກົນໄດ້;
- ຂໍອອກບັດອະນຸຍາດເຮັດວຽກນຳພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ, ນະຄອນຫຼວງວຽງຈັນ ຫຼື ສູນບໍລິການຈັດຫາງານ;

- ຂໍອອກບັດອະນຸຍາດພັກ-ເຊົາ ນຳກົມຕຳຫຼວດຄຸ້ມຄອງຄົນຕ່າງປະເທດ, ກະຊວງປ້ອງກັນຄວາມສະຫງົບ ຫຼື ກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ;
- ຂໍວີຊາເຂົ້າ-ອອກຫຼາຍເທື່ອ ນຳກົມກົງສຸນ, ກະຊວງການຕ່າງປະເທດ ໃນກໍລະນີຈຳເປັນເດີນທາງເຂົ້າ-ອອກ ຫຼາຍເທື່ອ.

**ມາດຕາ 24 ເອກະສານປະກອບຂໍອະນຸຍາດນຳເຂົ້າ**

ເອກະສານປະກອບຂໍອະນຸຍາດນຳເຂົ້າແຮງງານຕ່າງປະເທດ ເຂົ້າມາເຮັດວຽກຢູ່ ສປປ ລາວ ມີດັ່ງນີ້:

- ໃບຄຳຮ້ອງຂໍອະນຸຍາດນຳເຂົ້າອອກແຮງງານຕ່າງປະເທດ;
- ສຳເນົາໃບອະນຸຍາດໂກຕານຳໃຊ້ແຮງງານຕ່າງປະເທດ;
- ໃບທະບຽນວິສາຫະກິດ;
- ບັນຊີລາຍຊື່ຜູ້ອອກແຮງງານຕ່າງປະເທດທີ່ສະເໜີໃຫ້ເຂົ້າມາ;
- ໜັງສືຮັບປະກັນຈາກຜູ້ນຳໃຊ້ແຮງງານ;
- ໃບຢັ້ງຢືນສຸຂະພາບຂອງຜູ້ອອກແຮງງານຕ່າງປະເທດ ຈາກປະເທດຕົ້ນທາງ;
- ສຳເນົາໜັງສືຜ່ານແດນ.

## ໝວດທີ 6
## ການອອກບັດ ແລະ ຕໍ່ບັດອະນຸຍາດເຮັດວຽກໃຫ້ແຮງງານຕ່າງປະເທດ

**ມາດຕາ 25 ການອອກບັດອະນຸຍາດເຮັດວຽກ**

ຫົວໜ່ວຍແຮງງານ ທີ່ໄດ້ດຳເນີນຂັ້ນຕອນການຂໍອະນຸຍາດນຳເຂົ້າແຮງງານຕ່າງປະເທດມາເຮັດວຽກຢູ່ ສປປ ລາວ ຢ່າງຖືກຕ້ອງແລ້ວ ຕ້ອງຂໍອອກບັດອະນຸຍາດເຮັດວຽກ ໃຫ້ແຮງງານຕ່າງປະເທດນຳພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ, ນະຄອນຫຼວງວຽງຈັນ ຫຼື ສູນບໍລິການຈັດຫາງານ ພາຍໃນກຳນົດ 30 ວັນ ນັບແຕ່ມື້ທີ່ຜູ້ອອກແຮງງານຕ່າງປະເທດເຂົ້າມາ ສປປ ລາວ. ຖ້າກາຍກຳນົດແມ່ນຈະຖືກປັບໄໝຕາມທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້.

**ມາດຕາ 26 ເອກະສານປະກອບຂໍອອກບັດອະນຸຍາດເຮັດວຽກ**

ເອກະສານປະກອບຂໍອອກບັດອະນຸຍາດເຮັດວຽກໃຫ້ແຮງງານຕ່າງປະເທດ ປະກອບດ້ວຍ:
- ໃບຄຳຮ້ອງສະເໜີຂໍອອກບັດອະນຸຍາດເຮັດວຽກ;
- ໃບອະນຸຍາດນຳເຂົ້າແຮງງານຕ່າງປະເທດ ອອກໃຫ້ໂດຍ ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ, ນະຄອນຫຼວງວຽງຈັນ ຫຼື ສູນບໍລິການຈັດຫາງານ;
- ໃບສັນຍາແຮງງານ;
- ໃບຢັ້ງຢືນກວດສອບປະຫວັດຈາກກົມຕຳຫຼວດກວດຄົນເຂົ້າ-ອອກເມືອງ, ກະຊວງປ້ອງກັນຄວາມສະຫງົບ (ໃບຢັ້ງຢືນບັນຊີລາຍຊື່);
- ສຳເນົາໜັງສືຜ່ານແດນ ( passport) ແລະ ວີຊາແຮງງານ( Visa LA-B2 );
- ຮູບ ຂະໜາດ 3x4 ຈຳນວນ 2 ໃບ.

**ມາດຕາ 27 ການຕໍ່ບັດອະນຸຍາດເຮັດວຽກ**

ຜູ້ໃຊ້ແຮງງານຕ່າງປະເທດຢູ່ຕາມຫົວໜ່ວຍແຮງງານຕ່າງໆ ສາມາດຂໍຕໍ່ບັດອະນຸຍາດເຮັດວຽກໃຫ້ແຮງງານຂອງຕົນທີ່ຈະສືບຕໍ່ເຮັດວຽກ ນຳພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ, ນະຄອນຫຼວງວຽງຈັນ ຫຼື ສູນບໍລິການຈັດຫາງານ ຕາມຂໍ້ມູນບັດອະນຸຍາດເຮັດວຽກສະບັບກ່ອນ.

ສໍາລັບຜູ້ອອກແຮງງານທີ່ໄດ້ຮັບອະນຸມັດປ່ຽນສະຖານທີ່ເຮັດວຽກ ແມ່ນໃຫ້ຂໍອະນຸຍາດຕໍ່ບັດ ຢູ່ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ ຫຼື ນະຄອນຫຼວງວຽງຈັນ ທີ່ຜູ້ອອກແຮງງານຍ້າຍໄປປະຈໍາເຮັດວຽກ.

**ມາດຕາ 28 ເອກະສານປະກອບຂໍຕໍ່ບັດອະນຸຍາດເຮັດວຽກ**

ເອກະສານປະກອບຂໍຕໍ່ບັດອະນຸຍາດເຮັດວຽກໃຫ້ແຮງງານຕ່າງປະເທດ ມີດັ່ງນີ້:

- ໃບຄໍາຮ້ອງຂໍຕໍ່ບັດອະນຸຍາດເຮັດວຽກ;
- ບັດອະນຸຍາດເຮັດວຽກຂອງຜູ້ອອກແຮງງານຕ່າງປະເທດ;
- ສໍາເນົາໜັງສືຜ່ານແດນ (Passport );
- ສໍາເນົາໃບເສຍອາກອນເງິນເດືອນ;
- ໃບສັນຍາແຮງງານ ( ສືບຕໍ່ );
- ໃບຢັ້ງຢືນເຂົ້າເປັນສະມາຊິກປະກັນສັງຄົມ;
- ໃບກວດສຸຂະພາບ;
- ຮູບ ຂະໜາດ 3x4 ຈໍານວນ 2 ໃບ.

**ມາດຕາ 29 ການປ່ຽນສະຖານທີ່ເຮັດວຽກ**

ການປ່ຽນສະຖານທີ່ເຮັດວຽກ ແມ່ນການເຄື່ອນຍ້າຍບ່ອນເຮັດວຽກຂອງຜູ້ອອກແຮງງານຈາກແຂວງໜຶ່ງໄປສູ່ແຂວງໃໝ່ ພາຍໃຕ້ການຈ້າງງານຂອງຫົວໜ່ວຍແຮງງານເກົ່າ ເພື່ອປະຕິບັດວຽກງານໃນໄລຍະສັ້ນ ຫຼື ຍາວນານ. ຫົວໜ່ວຍແຮງງານທີ່ມີຈຸດປະສົງ ເຄື່ອນຍ້າຍຜູ້ອອກແຮງງານ ຕ້ອງສະເໜີໃຫ້ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ ຫຼື ນະຄອນຫຼວງວຽງຈັນ ບ່ອນທີ່ອອກບັດອະນຸຍາດເຮັດວຽກໃຫ້ ກ່ອນ 10 ວັນລັດຖະການ ເພື່ອແຈ້ງໄປຍັງ ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ ຫຼື ນະຄອນຫຼວງວຽງຈັນ ບ່ອນທີ່ຜູ້ອອກແຮງງານຈະເຄື່ອນຍ້າຍໄປປະຈໍາ;

ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ ຫຼື ນະຄອນຫຼວງວຽງຈັນ ຈະຕ້ອງເຮັດໜັງສືສະ ເໜີ ພ້ອມດ້ວຍບັນຊີລາຍຊື່ຂອງຜູ້ອອກແຮງງານຕ່າງປະເທດທີ່ຂໍປ່ຽນສະຖານທີ່ເຮັດວຽກ ເຖິງພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ ຫຼື ນະຄອນຫຼວງວຽງຈັນ ທີ່ຜູ້ອອກແຮງງານຈະເຄື່ອນຍ້າຍໄປປະຈໍາການ ເພື່ອຮັບຮູ້, ຕິດຕາມ ແລະ ຄຸ້ມຄອງ. ກໍານົດການເຮັດວຽກຢູ່ສະຖານທີ່ໃໝ່ແມ່ນອີງຕາມໄລຍະເວລາທີ່ໄດ້ລະບຸໄວ້ໃນບັດອະນຸຍາດເຮັດວຽກທີ່ໄດ້ອອກໃຫ້ຢູ່ສະຖານທີ່ເກົ່າ. ສໍາລັບບັດອະນຸຍາດເຮັດວຽກທີ່ສູນບໍລິການຈັດຫາງານເປັນຜູ້ອອກໃຫ້ ຫົວໜ່ວຍແຮງງານຕ້ອງແຈ້ງສູນບໍລິການຈັດຫາງານ ເພື່ອປ່ຽນສະຖານທີ່ເຮັດວຽກໃໝ່.

**ມາດຕາ 30 ເອກະສານປະກອບຂໍປ່ຽນສະຖານທີ່ເຮັດວຽກ**

ເອກະສານປະກອບຂໍປ່ຽນສະຖານທີ່ເຮັດວຽກ ມີດັ່ງນີ້:

1. ໜັງສືສະເໜີຈາກຫົວໜ່ວຍແຮງງານ;
2. ບັນຊີລາຍຊື່ຂອງຜູ້ອອກແຮງງານ ທີ່ຂໍປ່ຽນສະຖານທີ່ເຮັດວຽກ;
3. ສໍາເນົາບັດອະນຸຍາດເຮັດວຽກ.

## ໝວດທີ 7
## ຄ່າທຳນຽມ ແລະ ຄ່າບໍລິການ

### ມາດຕາ 31 ຄ່າທຳນຽມ

ຄ່າທຳນຽມຂໍອອກບັດ ແລະ ຕໍ່ບັດອະນຸຍາດເຮັດວຽກໃຫ້ຜູ້ອອກແຮງງານຕ່າງປະເທດ ທີ່ເຂົ້າມາເຮັດວຽກຢູ່ ສປປ ລາວ ເກັບ 85.000 ກີບຕໍ່ຄົນຕໍ່ເດືອນ ເທົ່າກັບ 1.020.000 ກີບຕໍ່ຄົນຕໍ່ປີ.

### ມາດຕາ 32 ຄ່າບໍລິການ

ຄ່າບໍລິການໃນການອະນຸຍາດໃຫ້ຜູ້ອອກແຮງງານຕ່າງປະເທດ ເຂົ້າມາ ເຮັດວຽກຢູ່ ສປປ ລາວ ໃຫ້ປະຕິບັດດັ່ງນີ້:

- ແບບຟອມຂໍໂກຕານຳໃຊ້ແຮງງານຕ່າງປະເທດ 10.000 ກີບ/ຊຸດ;
- ແບບຟອມຂໍອະນຸຍາດໃຫ້ຜູ້ອອກແຮງງານຕ່າງປະເທດເຂົ້າມາເຮັດວຽກ 10.000 ກີບ/ຊຸດ;
- ແບບຟອມຂໍອອກບັດ ແລະ ຕໍ່ບັດອະນຸຍາດເຮັດວຽກໃຫ້ແຮງງານຕ່າງປະເທດແຮງງານ 10.000 ກີບ/ຊຸດ;
- ບໍລິການອອກບັດ, ຕໍ່ບັດ ຫຼື ປ່ຽນບັດອະນຸຍາດເຮັດວຽກໃຫ້ແຮງງານຕ່າງປະເທດ ໃຫ້ເກັບ 50.000ກີບ/ຄົນ/ຄັ້ງ;
- ບໍລິການອອກໃບອະນຸຍາດໂກຕານຳເຂົ້າແຮງງານຕ່າງປະເທດ:
  + ຫົວໜ່ວຍແຮງງານທີ່ໄດ້ຮັບອະນຸມັດໂກຕາ ຈຳນວນ ແຕ່ 1-10 ຄົນ ໃຫ້ເກັບ 50.000 ກີບຕໍ່ຊຸດ;
  + ຫົວໜ່ວຍແຮງງານທີ່ໄດ້ຮັບອະນຸມັດໂກຕາ ຈຳນວນ ແຕ່ 11 ຄົນຂຶ້ນໄປ ໃຫ້ເກັບ 5.000 ກີບຕໍ່ຄົນ.

### ມາດຕາ 33 ການນຳໃຊ້ຄ່າທຳນຽມ ແລະ ຄ່າບໍລິການ

ຄ່າທຳນຽມໃນການອອກບັດ ແລະ ຕໍ່ບັດອະນຸຍາດເຮັດວຽກໃຫ້ຜູ້ອອກແຮງງານຕ່າງປະເທດ ທີ່ເຂົ້າມາເຮັດວຽກຢູ່ ສປປ ລາວ ຕ້ອງມອບເຂົ້າງົບປະມານຂອງລັດ 100%. ສຳລັບຄ່າບໍລິການແມ່ນສະເໜີຂໍນຳໃຊ້ໃຫ້ສອດຄ່ອງຕາມເປົ້າໝາຍ ຕາມລະບຽບການຂອງກະຊວງການເງິນທີ່ວາງອອກ.

## ໝວດທີ 8
## ຂໍ້ຫ້າມ

### ມາດຕາ 34 ຂໍ້ຫ້າມຕໍ່ອົງການຄຸ້ມຄອງວຽກງານແຮງງານ

ຫ້າມອົງການຄຸ້ມຄອງວຽກງານແຮງງານ ມີພຶດຕິກຳ ດັ່ງນີ້:

- ອະນຸມັດໂກຕານຳໃຊ້ແຮງງານຕ່າງປະເທດເຂົ້າມາເຮັດວຽກຢູ່ ສປປ ລາວ ບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
- ອອກບັດອະນຸຍາດເຮັດວຽກໃຫ້ຄົນຕ່າງປະເທດທີ່ ເຂົ້າມາເຮັດວຽກ ຢູ່ ສປປ ລາວ ເພື່ອຈຸດປະສົງອື່ນທີ່ບໍ່ສອດຄ່ອງກັບມາດຕາ 6 ຂອງຂໍ້ຕົກລົງສະບັບນີ້;
- ອະນຸຍາດໃຫ້ຜູ້ອອກແຮງງານຕ່າງປະເທດ ເຂົ້າມາເຮັດວຽກໃນຂົງເຂດອາຊີບທີ່ສະຫງວນໄວ້ໃຫ້ພົນລະເມືອງລາວ;

- ກົດໜ່ວງຖ່ວງດຶງເອກະສານ;
- ປອມແປງ ຫຼື ອອກເອກະສານໂດຍບໍ່ຖືກຕ້ອງ;
- ຂໍເອົາ, ຮຽກເອົາ, ທວງເອົາ ຫຼື ເປັນສື່ກາງ ໃນການໃຫ້ສິນບົນ;
- ຮຽກ ຫຼື ທວງເອົາ ຄ່າທຳນຽມ, ຄ່າບໍລິການ ແລະ ນຳໃຊ້ລາຍຮັບ ບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
- ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 35 ຂໍ້ຫ້າມຕໍ່ຜູ້ນຳໃຊ້ແຮງງານ**

ຫ້າມຜູ້ນຳໃຊ້ແຮງງານຕ່າງປະເທດ ມີພຶດຕິກຳດັ່ງນີ້:

- ນຳໃຊ້ແຮງງານແຮງງານຕ່າງປະເທດທີ່ບໍ່ໄດ້ຮັບການອະນຸຍາດຢ່າງຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
- ນຳເຂົ້າແຮງງານຕ່າງປະເທດ ເພື່ອແຈກຢາຍໃຫ້ຫົວໜ່ວຍແຮງງານອື່ນ ນຳໃຊ້;
- ປອມແປງເອກະສານ;
- ເອົາຜູ້ອອກແຮງງານຂອງຫົວໜ່ວຍແຮງງານອື່ນກຳລັງນຳໃຊ້;
- ປົກປິດຂໍ້ມູນ ຂ່າວສານ ຕໍ່ອົງການຄຸ້ມຄອງວຽກງານແຮງງານ;
- ໃຫ້ສິນບົນຕໍ່ອົງການຄຸ້ມຄອງວຽກງານແຮງງານ;
- ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 36 ຂໍ້ຫ້າມຕໍ່ຜູ້ອອກແຮງງານຕ່າງປະເທດ**

ຫ້າມຜູ້ອອກແຮງງານຕ່າງປະເທດ ທີ່ໄດ້ຮັບອະນຸຍາດ ເຂົ້າມາເຮັດວຽກຢູ່ ສປປ ລາວ ມີພຶດຕິກຳໃດໜຶ່ງ ດັ່ງນີ້:

- ລະເມີດ ສັນຍາແຮງງານ, ກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ;
- ປ່ຽນຜູ້ໃຊ້ແຮງງານ ແລະ ສະຖານທີ່ເຮັດວຽກ ໂດຍບໍ່ຖືກຕ້ອງ ຫຼື ບໍ່ໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງວຽກງານແຮງງານ;
- ລະເມີດສິດທິ ຂອງບຸກຄົນ, ນິຕິບຸກຄົນ ແລະ ສ່ວນລວມ;
- ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 9
## ອົງການຄຸ້ມຄອງວຽກງານແຮງງານ

**ມາດຕາ 37 ອົງການຄຸ້ມຄອງວຽກງານແຮງງານ**

ອົງການຄຸ້ມຄອງວຽກງານແຮງງານ ແມ່ນອົງການ ທີ່ໄດ້ກຳນົດໄວ້ໃນມາດຕາ 3, ຂໍ້ທີ 6 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 38 ສິດ ແລະ ໜ້າທີ່ຂອງ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ**

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ມີສິດ ແລະ ໜ້າທີ່ ດັ່ງນີ້:

- ຄົ້ນຄວ້າ ແລະ ສະເໜີຂໍອະນຸມັດຈຳນວນໂກຕາ ນຳໃຊ້ແຮງງານຕ່າງປະເທດປະຈຳປີ ຈາກຄະນະນຳກະຊວງແຮງງານ ແລະ ສະຫວັດດີການສັງຄົມ;
- ຄົ້ນຄ້ວາ ແລະ ພິຈາລະນາແບ່ງປັນໂກຕານຳໃຊ້ແຮງງານຕ່າງປະເທດ ໃຫ້ຫົວໜ່ວຍແຮງງານ ໃນທົ່ວປະເທດ ພາຍໃນກຳນົດເວລາ 15 ວັນລັດຖະການ ພາຍຫຼັງໄດ້ຮັບ ໃບຄຳຮ້ອງ ແລະ ເອກະສານຄົບຖ້ວນ;
- ພັດທະນາ ແລະ ປັບປຸງລະບົບໂປຣແກຣມການອະນຸມັດໂກຕານຳໃຊ້ ແລະ ອະນຸຍາດໃຫ້ຜູ້ອອກແຮງງານຕ່າງປະເທດເຂົ້າມາເຮັດວຽກ ຢູ່ ສປປ ລາວ ໃຫ້ສອດຄ່ອງກັບສະພາບ ໃນແຕ່ລະໄລຍະ;
- ໃຫ້ຄຳແນະນຳຫົວໜ່ວຍແຮງງານ ທີ່ມີຄວາມຕ້ອງການນຳໃຊ້ແຮງງານຕ່າງປະເທດ;
- ອອກໃບອະນຸຍາດນຳເຂົ້າແຮງງານຕ່າງປະເທດເຂົ້າມາເຮັດວຽກ ຢູ່ຫົວໜ່ວຍແຮງງານຕ່າງໆ ໃນຂອບເຂດທົ່ວປະເທດ ຕາມໃບອະນຸຍາດໂກຕານຳໃຊ້ແຮງງານຕ່າງປະເທດ ທີ່ໄດ້ຮັບອະນຸມັດ ພາຍໃນເວລາ 3 ວັນລັດຖະການ;
- ອອກບັດ ແລະ ຕໍ່ບັດອະນຸຍາດເຮັດວຽກໃຫ້ແຮງງານຕ່າງປະເທດທີ່ເຂົ້າມາເຮັດວຽກຢູ່ ສປປ ລາວ ຕາມຂັ້ນຕອນຕາມທີ່ກຳນົດໄວ້ໃນລະບຽບການທີ່ກ່ຽວຂ້ອງ ພາຍໃນ 5 ວັນລັດຖະການ;
- ເກັບບັດອະນຸຍາດເຮັດວຽກ ຈາກຜູ້ອອກແຮງງານ ພາຍຫຼັງສິ້ນສຸດສັນຍາແຮງງານ;
- ຕິດຕາມ ແລະ ກວດກາການອະນຸຍາດໃຫ້ຜູ້ອອກແຮງງານຕ່າງປະເທດເຂົ້າມາເຮັດວຽກ, ອອກບັດ ແລະ ຕໍ່ບັດອະນຸຍາດເຮັດວຽກໃຫ້ແຮງງານຕ່າງປະເທດ ຂອງພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ, ນະຄອນຫຼວງວຽງຈັນ ແລະ ສູນບໍລິການຈັດຫາງານ;
- ຄົ້ນຄວ້າ ອະນຸມັດການປ່ຽນໂອນຜູ້ອອກແຮງງານ ຈາກຫົວໜ່ວຍແຮງງານໃດໜຶ່ງ ໄປໃຫ້ຫົວໜ່ວຍແຮງງານອື່ນ;
- ສ້າງຄວາມເຂັ້ມແຂງໃຫ້ພະນັກງານທີ່ຮັບຜິດຊອບການຄົ້ນຄວ້າອະນຸຍາດໃຫ້ຜູ້ອອກແຮງງານຕ່າງປະເທດເຂົ້າມາເຮັດວຽກ, ການອອກບັດ ແລະ ຕໍ່ບັດອະນຸຍາດເຮັດວຽກໃຫ້ແຮງງານຕ່າງປະເທດ;
- ປະສານງານກັບຂະແໜງການທີ່ກ່ຽວຂ້ອງເພື່ອສ້າງກົນໄກອຳນວຍຄວາມສະດວກການນຳໃຊ້ແຮງງານຕ່າງປະເທດຂອງຫົວໜ່ວຍແຮງງານ;
- ຈັດພິມ ແລະ ແຈກຢາຍບັດອະນຸຍາດເຮັດວຽກສຳລັບແຮງງານຕ່າງປະເທດຢູ່ ສປປ ລາວ ໃຫ້ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ, ນະຄອນຫຼວງວຽງຈັນ ແລະ ສູນບໍລິການຈັດຫາງານ;
- ເຜີຍແຜ່ຂໍ້ມູນຂ່າວສານ ໃຫ້ພະແນກແຮງງານ ແລະ ສະຫວັດດີການສັງຄົມ ແຂວງ, ນະຄອນຫຼວງວຽງຈັນ, ສູນບໍລິການຈັດຫາງານ ແລະ ຫົວໜ່ວຍແຮງງານ ໃນແຕ່ລະໄລຍະ;
- ປະຕິບັດໜ້າທີ່ອື່ນ ຕາມພາລະບົດບາດ, ຄວາມຮັບຜິດຊອບຂອງຕົນ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 39 ສິດ ແລະ ໜ້າທີ່ຂອງ ພະແນກແຮງງານ ແລະ ສະຫວັດດີການສັງຄົມ ແຂວງ ແລະ ນະຄອນຫຼວງວຽງຈັນ**

ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ ແລະ ນະຄອນຫຼວງວຽງຈັນ ມີສິດ ແລະ ໜ້າທີ່ ດັ່ງນີ້:

- ໃຫ້ຄຳແນະນຳຫົວໜ່ວຍແຮງງານ ທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ທີ່ມີຄວາມຕ້ອງການນຳໃຊ້ແຮງງານຕ່າງປະເທດ;

- ຄົ້ນຄວ້າ ແລະ ຢັ້ງຢືນການສະເໜີຂໍໂກຕານຳໃຊ້ແຮງງານຕ່າງປະເທດຂອງຫົວໜ່ວຍແຮງງານ ໃນກໍລະນີສະເໜີຜ່ານພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ ຫຼື ນະຄອນຫຼວງວຽງຈັນ ເພື່ອໃຫ້ກົມພັດທະນາສີມືແຮງງານ ແລະ ຈັດຫາງານ ແບ່ງປັນ;
- ອອກໃບອະນຸຍາດນຳເຂົ້າແຮງງານຕ່າງປະເທດເຂົ້າມາເຮັດວຽກ ຢູ່ຫົວໜ່ວຍແຮງງານ ໃນຂົງເຂດຄວາມຮັບຜິດຊອບຂອງຕົນ ຕາມໃບອະນຸຍາດໂກຕານຳໃຊ້ແຮງງານຕ່າງປະເທດ ທີ່ໄດ້ອະນຸມັດພາຍໃນເວລາ 3 ວັນລັດຖະການ;
- ອອກບັດ ແລະ ຕໍ່ບັດອະນຸຍາດເຮັດວຽກໃຫ້ແຮງງານຕ່າງປະເທດທີ່ເຂົ້າມາເຮັດວຽກຢູ່ ໃນແຂວງຂອງຕົນ ໃຫ້ຖືກຕ້ອງຕາມຂັ້ນຕອນຕາມທີ່ກຳນົດໄວ້ໃນລະບຽບການທີ່ກ່ຽວຂ້ອງ ພາຍໃນ 5 ວັນລັດຖະການ;
- ເກັບບັດອະນຸຍາດເຮັດວຽກ ຈາກຜູ້ອອກແຮງງານ ພາຍຫຼັງສິ້ນສຸດສັນຍາແຮງງານ;
- ຄຸ້ມຄອງແຮງງາຕ່າງປະເທດທີ່ຕົນອະນຸຍາດໃຫ້ເຄື່ອນໄຫວຕາມກົດໝາຍ ແລະ ລະບຽບການ;
- ຄົ້ນຄວ້າ ອະນຸມັດການປ່ຽນໂອນຜູ້ອອກແຮງງານ ຈາກຫົວໜ່ວຍແຮງງານໃດໜຶ່ງ ໄປໃຫ້ຫົວໜ່ວຍແຮງງານອື່ນ;
- ເກັບຄ່າທຳນຽມ ແລະ ຄ່າບໍລິການ ຕາມລະບຽບການ ການເງິນທີ່ປະກາດນຳໃຊ້ໃນແຕ່ລະໄລຍະ;
- ລາຍງານການອະນຸຍາດໃຫ້ຜູ້ອອກແຮງງານຕ່າງປະເທດເຂົ້າມາເຮັດວຽກ, ການອອກບັດ ແລະ ຕໍ່ບັດອະນຸຍາດເຮັດວຽກໃຫ້ແຮງງານຕ່າງປະເທດທີ່ຢູ່ໃນເຂດຄວາມຮັບຜິດຊອບຂອງຕົນ, ການເກັບຄ່າທຳນຽມ ແລະ ບໍລິການ ໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຊາບກ່ອນວັນທີ 25 ຂອງທຸກໆເດືອນ;
- ແບ່ງຄວາມຮັບຜິດຊອບໃຫ້ຂັ້ນເມືອງ ຕາມຄວາມເໝາະສົມເພື່ອຕິດຕາມຄຸ້ມຄອງ, ເກັບກຳຂໍ້ມູນ, ສະໜອງຂໍ້ມູນ ແລະ ລາຍງານໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຢ່າງເປັນປົກກະຕິ;
- ປະສານງານກັບພາກສ່ວນຕ່າງໆທີ່ກ່ຽວຂ້ອງ ໃນຂົງເຂດຄວາມຮັບຜິດຊອບຂອງຕົນ ເພື່ອອຳນວຍຄວາມສະດວກໃຫ້ແກ່ຫົວໜ່ວຍແຮງງານ ໃນການນຳໃຊ້ແຮງງານຕ່າງປະເທດ;
- ໂຄສະນາເຜີຍແຜ່ຂໍ້ຕົກລົງສະບັບນີ້ໃຫ້ພາກສ່ວນຕ່າງໆທີ່ກ່ຽວຂ້ອງເຂົ້າໃຈ.

## ໝວດທີ 10
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 40 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານໃນການປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງມີຄຸນນະພາບ ແລະ ດຳເນີນຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ ຈະໄດ້ຮັບການຍ້ອງຍໍ ຫຼື ປະຕິບັດນະໂຍບາຍອື່ນ ຕາມລະບຽບການ.

### ມາດຕາ 41 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຕໍ່ຂໍ້ຕົກລົງສະບັບນີ້ ຈະຖືກດຳເນີນມາດຕະການ ດັ່ງນີ້:
- ຫົວໜ່ວຍແຮງງານທີ່ນຳໃຊ້ແຮງງານຕ່າງປະເທດ ໂດຍບໍ່ປະຕິບັດຕາມຂັ້ນຕອນທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ ຈະຖືກປັບໄໝເທົ່າກັບ 2.500.000 ກີບຕໍ່ຄົນຕໍ່ຄັ້ງ;
- ຫົວໜ່ວຍແຮງງານທີ່ນຳໃຊ້ແຮງງານຕ່າງປະເທດ ບໍ່ຖືກສະຖານທີ່ເຮັດວຽກຕາມທີ່ກຳນົດໄວ້ ໃນໃບອະນຸຍາດເຮັດວຽກຈະຖືກປັບໃໝເທົ່າກັບ 2.000.000 ກີບຕໍ່ຄົນຕໍ່ຄັ້ງ;

- ຫົວໜ່ວຍແຮງງານທີ່ສືບຕໍ່ລະເມີດການນຳໃຊ້ແຮງງານຕ່າງປະເທດບໍ່ຖືກຕ້ອງຕາມຂັ້ນຕອນ ຫຼື ນຳໃຊ້ແຮງງານຕ່າງປະເທດບໍ່ຖືກສະຖານທີ່ເຮັດວຽກ ເປັນຄັ້ງທີ່ສອງ ຈະຖືກປັບໄໝເປັນຈຳນວນເງິນ 5.000.000 ກີບຕໍ່ຄົນຕໍ່ຄັ້ງ ແລະ ຈະຖືກຕັດສິດໃນການນຳໃຊ້ແຮງງານຕ່າງປະເທດ ໃນໄລຍະເວລາ 1 ປີ ພ້ອມທັງຮັບຜິດຊອບຕໍ່ການໃຊ້ຈ່າຍໃນການຈັດສົ່ງຜູ້ອອກແຮງງານຕ່າງປະເທດກັບຄືນປະເທດ;
- ຫົວໜ່ວຍແຮງງານທີ່ບໍ່ຂໍອະນຸຍາດອອກບັດອະນຸຍາດເຮັດວຽກໃຫ້ຜູ້ອອກແຮງງານຕ່າງປະເທດທີ່ເຂົ້າມາເຮັດວຽກຢູ່ ສປປ ລາວ ນຳອົງການຄຸ້ມຄອງວຽກງານແຮງງານ ພາຍໃນ 30 ວັນ ນັບແຕ່ມື້ຜູ້ອອກແຮງງານຕ່າງປະເທດເຂົ້າມາ ສປປ ລາວ ຈະຖືກປັບໄໝ 50.000 ກີບຕໍ່ຄົນຕໍ່ວັນຂອງຈຳນວນມື້ທີ່ເກີນ;
- ຫົວໜ່ວຍແຮງງານ ທີ່ນຳໃຊ້ແຮງງານຕ່າງປະເທດ ເກີນກຳນົດເວລາທີ່ໄດ້ຮັບອະນຸຍາດ ຈະຖືກປັບໄໝເທົ່າກັບ 50.000 ກີບຕໍ່ຄົນຕໍ່ວັນຂອງຈຳນວນມື້ທີ່ເກີນ;
- ຜູ້ອອກແຮງງານຕ່າງປະເທດ ທີ່ເຮັດວຽກຢູ່ຕາມຫົວໜ່ວຍແຮງງານ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໄໝ 1.000.000 ກີບຕໍ່ຄົນຕໍ່ຄັ້ງ;
- ຜູ້ອອກແຮງງານຕ່າງປະເທດ ທີ່ກະທຳຜິດຕໍ່ລະບຽບກົດໝາຍ, ຮີດຄອງປະເພນີຂອງ ສປປ ລາວ ໃຫ້ປະຕິບັດຕາມມາດຕະການສະຖານໜັກ ຫຼື ເບົາ ຕາມກົດໝາຍ ສປປ ລາວ ກຳນົດໄວ້.

## ໝວດ 11
## ການຈັດຕັ້ງປະຕິບັດ

### ມາດຕາ 42 ການຈັດຕັ້ງປະຕິບັດ

ກົມພັດທະນາສີມືແຮງງານ ແລະ ຈັດຫາງານ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ, ນະຄອນຫຼວງວຽງຈັນ ແລະ ສູນບໍລິການຈັດຫາງານ ເປັນເຈົ້າການ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້. ບັນດາກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຂໍ້ຕົກລົງ ສະບັບນີ້ຢ່າງເຂັ້ມງວດ.

### ມາດຕາ 43 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ປ່ຽນແທນຂໍ້ຕົກລົງສະບັບເລກທີ່ 5418/ຮສສ, ລົງວັນທີ 10 ທັນວາ 2007,ເຊິ່ງທຸກຂໍ້ຕົກລົງທີ່ຜ່ານມາຫາກຂັດກັບເນື້ອໃນ ຂໍ້ຕົກລົງສະບັບນີ້ ລ້ອນແຕ່ຖືກລົບລ້າງ ແລະ ມີຜົນບັງຄັບໃຊ້ ນັບຕັ້ງແຕ່ວັນທີລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີ**

ກະຊວງແຮງງານແລະສະຫວັດດີການສັງຄົມ
ລັດຖະມົນຕີ

ປອ. ຄຳແພງ ໄຊສົມແພງ